ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ອະດີດນັກສຶກສາ ສທຄ ພົບປະດ້ວຍຜົນງານໃໝ່




ກອງປະຊຸມພົບປະ ແລະ ແລກປ່ຽນບົດຮຽນຂອງສະໂມສອນນັກສຶກສາສະຖາບັນການທະນາຄານ (ສທຄ) ທີ່ເຄີຍສຶກສາໃນລະຫວ່າງ ສົກສຶກສາປີ 2000 ຫາ 2022 ໄດ້ຈັດຂຶ້ນໃນຕົ້ນເດືອນຕຸລາຜ່ານມາທີ່ ສທຄ ໂດຍການເຂົ້າຮ່ວມຂອງທ່ານ ປອ. ອາຄົມ ປຣະເສີດ ຫົວໜ້າ ສທຄ, ມີຄະນະບໍລິຫານງານສະໂມສອນ-ອະດີດນັກສຶກສາ ພ້ອມດ້ວຍພາກສ່ວນກ່ຽວຂ້ອງ.

ການພົບປະແລກປ່ຽນບົດຮຽນໃນຄັ້ງນີ້ເກີດຂຶ້ນໃນທ່າມກາງກະແສເສດຖະກິດໂລກ ໄດ້ຮັບຜົນກະທົບຈາກຜົນຮ້າຍຍ້ອນຫຼັງຂອງສົງຄາມການຄ້າແລະຄ່າເງິນຂອງ 2 ມະຫາອຳນາດ; ການແຜ່ລະບາດຂອງພະຍາດໂຄວິດ-19 ແລະການປະຕິການພິເສດທາງການທະຫານຂອງຣັດເຊຍຕໍ່ຢູເຄຣນອັນໄດ້ກໍ່ໃຫ້ເກີດມີບັນຫາລາຄາສິນຄ້າສະບຽງອາຫານ, ພະລັງງານ, ຄ່າເງິນມີການຜັນຜວນ, ຄ່າຄອງຊີບມີຄວາມຝືດເຄືອງໃນທົ່ວໂລກກໍ່ຄືປະເທດຂອງພວກເຮົາ; ແຕ່ດ້ວຍການນຳພາຢ່າງໃກ້ສິດຂອງພັກ ແລະ ລັດຖະບານເຮົາຊຶ່ງໄດ້ມີການປະຄັບປະຄອງເສດຖະກິດໃຫ້ຢູ່ໄດ້ໃນລະດັບທີ່ເໝາະສົມພໍສົມຄວນ ແລະ ໄດ້ມີການແກ້ໄຂຢ່າງເປັນລະບົບ ແລະ ຕໍ່ເນື່ອງໂດຍສະເພາະການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ການເງິນ.

ການພົບປະຍັງຢູ່ໃນໄລຍະການສ້າງຂະບວນການຂໍ່ານັບຮັບຕ້ອນວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ (ທຫລ) ຄົບຮອບ 54 ປີ (7 ຕຸລາ 1968-7 ຕຸລາ 2022) ກໍ່ຄືດຳເນີນຕາມແຜນການເຄື່ອນໄຫວປະຈຳສົກສຶກສາ 2022-2023 ຂອງສະໂມສອນອະດີດນັກສຶກສາທີ່ເປັນສ່ວນໜຶ່ງໃນການປະກອບສ່ວນດ້ານວຽກງານ ສທຄ ທີ່ເຮັດໜ້າທີ່ເຕົ້າໂຮມບັນດາອະດີດນັກສຶກສາໃນແຕ່ລະຮຸ່ນເພື່ອລະດົມມັນສະໝອງເຂົ້າໃນການແລກປ່ຽນຂໍ້ມູນຂ່າວສານ ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຊຶ່ງໃນຜ່ານມາໄດ້ມີການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ໃນທ້າຍປີ 2019-2021 ຍ້ອນມີການແຜ່ລະບາດຂອງພະຍາດໂຄວິດ-19 ຈຶ່ງບໍ່ມີກິດຈະກຳ ແລະ ໃນທ້າຍປີ 2021 ຈຶ່ງໄດ້ມີການຈັດຕັ້ງກອງປະຊຸມຜ່ານລະບົບອອນລາຍໂດຍການຊ່ວຍເຫຼືອຂອງ ສທຄ, ສະໂມສອນອະດີດນັກສຶກສາ ໄດ້ມີການເຜີຍແຜ່ຂໍ້ມູນຢູ່ແຂວງສະຫວັນນະເຂດຊຶ່ງມີອະດີດນັກສຶກສາໃຫ້ຄວາມສົນໃຈ ແລະ ເຂົ້າຮ່ວມຫຼາຍສົມຄວນ;




ດັ່ງນັ້ນ, ຈຶ່ງເກີດມີກິດຈະກຳພົບປະອະດີດນັກສຶກສາ ແລະ ການພົບປະໃນຫຼາຍຮຸ່ນພ້ອມກັນນີ້ສາມາດຍາດແຍ່ງຄວາມຮູ້ຈາກຮຸ່ນຕໍ່ຮຸ່ນ ຫຼືວ່າ: "ອ້າຍຮູ້ 2 ນ້ອງຮູ້ 1 ຫຼື ເຂົາຄວາຍແຫຼມເນືອໜ້າ" ເຫຼົ່ານີ້ເປັນຕົ້ນ ແລະ ການພົບກັນໃນເທື່ອນີ້ຍັງເປັນຄັ້ງທຳອິດ ທີ່ມີຜູ້ປະຈຳການຢູ່ນະຄອນຫຼວງວຽງຈັນ ແລະ ຂັ້ນທ້ອງຖິ່ນເຂົ້າຮ່ວມ ໂດຍມີຫຼາຍກິດຈະກຳເປັນຕົ້ນການລາຍງານການເຄື່ອນໄຫວແລະນຳສະເໜີວຽກງານສະໂມສອນຈຳນວນໜຶ່ງ, ແລກປ່ຽນປະສົບການຕົວຈິງຂອງອະດີດນັກສຶກສາທີ່ເປັນພະນັກງານບຳນານ-ພະນັກງານທີ່ປະຈຳການຢູ່ພາກລັດ ແລະ ເອກະຊົນຢູ່ຂັ້ນສູນກາງ, ຂະແໜງການ ແລະ ທ້ອງຖິ່ນອັນໄດ້ເຮັດໃຫ້ການພົບປະໄດ້ມີການຮັບຮູ້ຂໍ້ມູນດ້ານພຶດຕິກຳຕົວຈິງທຽບໃສ່ກັບທິດສະດີ-ບົດຮຽນໃນຜ່ານມາເຫັນວ່າມີຫຼາຍອັນພົ້ນເດັ່ນໃນວຽກງານທີ່ຂັ້ນເທິງມອບໝາຍໃຫ້ກໍ່ຄືຜົນຮັບໃນທຸລະກິດຂອງສ່ວນບຸກຄົນ.

ທ່ານ ປອ. ອາຄົມ ປຣະເສີດ ຍັງເນັ້ນໃຫ້ຄະນະນຳສະໂມສອນ ແລະ ອະດີດນັກສຶກສາມີການສ້າງແຜນການເຄື່ອນໄຫວຂອງສະໂມສອນອະດີດນັກສຶກສາ ສທຄ ໂດຍສົມທົບກັບພະແນກຄຸ້ມຄອງ ແລະ ກິດຈະກຳນັກສຶກສາ ຈັດຕັ້ງກິດຈະກຳທາງດ້ານວິຊາການຕື່ມອີກ ເປັນຕົ້ນການໃຫ້ບົດຮຽນຈາກປະສົບການທີ່ມີຄວາມອຸດົມສົມບູນຈາກຊີວິດຈິງຢູ່ໃນໜ້າທີ່ວຽກງານທະນາຄານ-ສະຖາບັນການເງິນ, ຂະແໜງການອື່ນລວມທັງການນຳຄວາມຮູ້ຈາກ ສທຄ ພັດທະນາຄອບຄົວ ແລະ ທ້ອງຖິ່ນປະກອບສ່ວນເຂົ້າໃນການສ້າງລາຍຮັບໃຫ້ອົງກອນ ແລະ ຄອບຄົວ; ພ້ອມນັ້ນ, ຍັງໃຫ້ມີການສຳມະນາການກຽມຄວາມພ້ອມໃນການສະໝັກວຽກໃຫ້ແກ່ນັກສຶກສາປີສຸດທ້າຍ , ສືບຕໍ່ໃນການສົ່ງຂໍ້ມູນຂ່າວສານໃນການຊອກຫາວຽກເຮັດງານທຳເພື່ອສົ່ງຂ່າວໃຫ້ແກ່ນັກສຶກສາຂອງ ສທຄ ແລະ ຈັດຕັ້ງເວທີແລກປ່ຽນຄວາມຮູ້ດ້ານວິຊາການຕາມສາຂາວິຊາຕ່າງໆໃຫ້ນ້ອງໆນັກສຶກສາໃໝ່ເພື່ອຊຸກຍູ້ ແລະ ສົ່ງເສີມການຮຽນຮູ້ຄູ່ກັບຄຸນນະທຳທີ່ຮຸ່ນອ້າຍໄດ້ສ້າງໄວ້ເພື່ອຈັດຕັ້ງເສີມຂະຫຍາຍໃນສິ່ງທີ່ດີງາມໃຫ້ມີບາດກ້າວຫັນປ່ຽນໃໝ່ທີ່ທັນສະໄໝ ແລະ ມີປະສິດທິພາບ, ປະສິດທິຜົນຍິ່ງໆຂຶ້ນ.

**# ຂ່າວ: ຣັດສະໝີ ດວງສັດຈະ**

## ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ